# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 21 ກຸມພາ 2010 (21-2-2010)

---

## ແມ່ນຫຍັງຢູ່ໃນຄວາມຄິດຂອງທ່ານ?

**ຂໍ້ພຣະຄັມພີໃນບົດຮຽນ:** ໂກໂລຊາຍ 3:1-14

### ຜົນສະທ້ອນຕໍ່ຊີວິດ

ບົດຮຽນສາມາດຊ່ວຍທ່ານຄິດແລະສະແດງຕົວທີ່ກົງກັບຊີວິດໃໝ່ໃນພຣະຄຣິດຂອງທ່ານຢ່າງສມ່ຳສເມີ.

### ເປົ້າໝາຍຂອງບົດຮຽນ

ບົດຮຽນນີ້ແມ່ນກ່ຽວກັບການຈິດຈໍ່ເພ່ງຄວາມຄິດໃສ່ພຣະຄຣິດ, ໃຫ້ເອົາຄວາມຄິດທີ່ບໍ່ດີອອກຈາກຊີວິດແລະເອົານິສັຍໃຈຄໍທີ່ເຕັມໄປດ້ວຍຄວາມຮັກໃນພຣະເຈົ້າມາແທນທີ່.

### ຄວາມສຳຄັນຂອງບົດຮຽນ

ຄົນທົ່ວໄປມັກແບ່ງແຍກຊີວິດອອກເປັນພາກສ່ວນ ຄື ຝ່າຍວິຍານ ຫຼືສາສນາ, ແລະການກະທຳທຸກໆຢ່າງປະຈຳວັນແບບມະນຸດທຳມະດາ, ຄົນເຫຼົ່ານີ້ໄດ້ຕັ້ງພາກສ່ວນທີ່ຈອມປອມ. ທຸກໆສ່ວນຂອງການກະທຳ, ນິສັຍໃຈຄໍ, ຄວາມນຶກຄິດ ຄວນຮວມເຂົ້າກັນເປັນຂອງພຣະເຈົ້າ. ຄວາມເຊື່ອຂອງຄຣິສຕຽນຕ້ອງສະແດງອອກຢູ່ໃນການກະທຳໃນຊີວິດປະຈຳວັນ ແລະຄວາມສັມພັນຊຶ່ງກັນແລະກັນ.

### ການສຶກສາພຣະຄັມພີ

ຂ້າພະເຈົ້າເຄີຍທຳງານໜັກເພື່ອໃຫ້ວຽກທີ່ເຕັມຢູ່ໜ້າໂຕະທຳງານໜ້ອຍລົງ. ຂ້າພະເຈົ້າກໍໄດ້ຮຽນຮູ້ອີກວ່າສິ່ງທີ່ວາງຢູ່ເທິງໂຕະນັ້ນສຳຄັນຫລາຍ ແລະມີຫລາຍແນວເກີນໄປຢູ່ເທິງໂຕະນັ້ນຈະເກີດມີສິ່ງກີດຂວາງທີ່ໄຮ້ປໂຍດ. ການທີ່ເກັບເອົາບາງສິ່ງທີ່ກີດຂວາງອອກຈາກເທິງໂຕະນັ້ນຈະຊ່ວຍໃຫ້ມີຈິດສຳນຶກ ແລະສະມາທິແຫລມຄົມຂຶ້ນສຳລັບວຽກງານທີ່ຄ້າງຄາຢູ່. ພວກເຮົາມັກຈະຖືກຄວາມຄິດຕ່າງໆໃນໂລກດູດດຶງເອົາເຮົາອອກຈາກຄວາມຄິດທີ່ຈິດຈໍ່ໃສ່ພຣະຄຣິດແລະໃຊ້ຊີວິດຢູ່ເພື່ອພຣະອົງ. ພວກເຮົາຈະເຮັດແນວໃດເພື່ອກວາດລ້າງສິ່ງກີດຂວາງນີ້ອອກຈາກຈິດໃຈຂອງເຮົາ ເພື່ອເຮົາຈະສາມາດຄິດແຈ່ມແຈ້ງຂຶ້ນ ແລະສະແດງຕົນໃນວິທີທາງທີ່ກົງກັບຊີວິດໃໝ່ໃນພຣະຄຣິດ?

### 1. <u>ຄວາມຄິດແບບໃໝ່</u>: ໂກໂລຊາຍ 3:1-4

ອາຈານໂປໂລໄດ້ອະທິບາຍແກ່ຊາວໂກໂລຊາຍວ່າ ກ່ອນທີ່ຈະມາຮູ້ຈັກກັບພຣະຄຣິດນັ້ນ ພວກເຂົາໄດ້ອາສັຍຢູ່ໃນ “ຂົງເຂດຂອງຄວາມມືດ”, ຜີມານຊາຕານເປັນຜູ້ປົກຄອງໃນຂົງເຂດຂອງຄວາມມືດ ແລະຜູ້ທີ່ອາສັຍຢູ່ທີ່ນັ້ນມີຊີວິດຢູ່ໃຕ້ຄວາມຊັກຈູງຂອງມັນ. ເຖິງຢ່າງໃດກໍຕາມ, ພຣະເຈົ້າໄດ້ຊ່ວຍເອົາພວກເຂົາໃຫ້ພົ້ນຈາກຄວາມໂຫດຮ້າຍຂອງມັນ ແລະຍ້າຍພວກເຂົາມາຢູ່ໃນ “ຣາຊອານາຈັກຂອງພຣະບຸດທີ່ຮັກຂອງພຣະອົງ.” ພຣະຄຣິດເປັນຜູ້ປົກຄອງຣາຊອານາຈັກນີ້ ແລະຜູ້ທີ່ອາສັຍຢູ່ໃນເມືອງນີ້ກໍເປັນມະນຸດຄົນໃໝ່ທີ່ໃຊ້ຊີວິດພາຍໃຕ້ອຳນາດການນຳພາຂອງພຣະ

ອີງ. ຊີວິດຂອງພວກເຮົາກໍຄວນເຕັມໄປດ້ວຍການມີນິສັຍລັກສະນະຂອງຄວາມຄິດ, ການວາງຕົວ, ແລະຄວາມສຳພັນແບບໃໝ່ທັງນັ້ນ.

ພວກເຮົາຄວນຈິດຈໍ່ຈິດໃຈຂອງພວກເຮົາໃສ່ພຣະຄຣິດເພາະວ່າສິ່ງທີ່ເຮົາຄິດຊັກນຳການສະແດງຕົວ ແລະຄວາມສຳພັນກັບຄົນອື່ນ. ພວກເຮົາຄວນສແວງຫາສິ່ງທີ່ຢູ່ເບື້ອງເທິງ ເພາະວ່າພວກເຮົາຖືກຊຸບລ້ຽງດ້ວຍພຣະເມຊີອາມາຕລອດ. ພຣະເຈົ້າສັ່ງໃຫ້ພວກເຮົາຊອກສແວງຫາສິ່ງທີ່ຢູ່ເບື້ອງເທິງ ບ່ອນທີ່ພຣະຄຣິດຊົງນັ່ງປະທັບຢູ່ເບື້ອງຂວາຂອງພຣະເຈົ້າ. ການຊອກສແວງຫາສິ່ງທີ່ຢູ່ເບື້ອງເທິງໝາຍຄວາມວ່າເອົາສິ່ງທີ່ພຣະຄຣິດຕ້ອງການມາເປັນຂອງເຮົາ ແລະໃຊ້ຊີວິດໄປຕາມແບບນັ້ນ. ຜູ້ທີ່ອ້າງຕົນເອງວ່າເປັນຄຣິສຕຽນທີ່ບໍ່ເຄີຍຄິດກ່ຽວກັບພຣະເຢຊູແຕ່ລະວັນຄວນຕ້ອງກັບຄືນໄປກວດກາຄວາມສຳພັນກັບພຣະເຢຊູຄືນໃໝ່ອີກ.

ພວກເຮົາຕ້ອງຈິດຈໍ່ຄວາມຄິດຂອງເຮົາໃສ່ສິ່ງທີ່ຢູ່ເບື້ອງເທິງ, ຢ່າປ່ອຍໃຫ້ສິ່ງທີ່ຢູ່ໃນໂລກນຳພາຊັກຈູງກິຣິຍາຄວາມສົນໃຈຂອງເຮົາອອກຈາກພຣະຄຣິດ. ພວກເຮົາຕ້ອງມີການຕັ້ງໃຈຈິດຈໍ່ຈິດໃຈຄວາມຄິດໃສ່ພຣະຄຣິດດ້ວຍການເລົ່າພຣະຄຳ, ພາວະນາພຣະຄຳ ແລະຄິດເຖິງບົດພຣະຄຳນັ້ນຕລອດວັນ. ການພາວະນາອະທິຖານກໍເປັນວິທີທີ່ເຮົາສາມາດຄິດເຖິງສິ່ງທີ່ຢູ່ເບື້ອງເທິງເໝືອນກັນ.

ອາຈານໂປໂລໄດ້ບອກອີກວ່າ ຜູ້ທີ່ໄດ້ວາງໃຈເຊື່ອຮັບເອົາຄວາມພົ້ນຈາກພຣະຄຣິດນັ້ນໄດ້ຕາຍແລ້ວ. ເວລາພວກເຮົາວາງຄວາມເຊື່ອຮັບເອົາຄວາມພົ້ນຈາກພຣະຄຣິດນັ້ນ ພວກເຮົາໄດ້ຕາຍຈາກອຳນາດຂອງຜູ້ທີ່ທຳງານຕໍ່ສູ້ພຣະຄຣິດ, ຕາຍຈາກຄວາມບາບ, ແລະຊີວິດອັນເກົ່າ. ໃນຖານະທີ່ເປັນຜູ້ຕິດຕາມພຣະເຢຊູ ພວກເຮົາຄວນມີຄວາມຢາກໄດ້ສິ່ງທີ່ຢູ່ໃນໂລກນີ້ໃຫ້ນ້ອຍທີ່ສຸດເໝືອນກັບຄົນທີ່ຕາຍແລ້ວ. ຊີວິດຝ່າຍວິນຍານຂອງເຮົາໄດ້ຊ້ອນຢູ່ກັບພຣະເມຊີອາໃນພຣະເຈົ້າຢ່າງປອດພັຍ. ດັ່ງນັ້ນ, ຜູ້ທີ່ເຊື່ອຄວນໃຊ້ຊີວິດປະຈຳວັນຈິດຈໍ່ຕໍ່ການລໍຄອຍວັນກັບມາຂອງພຣະຄຣິດວັນທີ່ຄວາມມັ່ງຄັ່ງສົມບູນຂອງຊີວິດເຮົາໃນພຣະຄຣິດຈະຖືກເປີດເຜີຍ.

## 2. <u>*ການປະພຶດແບບໃໝ່*</u>: ໂກໂລຊາຍ 3:5-11

ຄວາມຄິດແບບໃໝ່ຄວນຊັກຈູງນຳພາການການປະພຶດແບບໃໝ່. ອາຈານ ໂປໂລໄດ້ຂຽນລາຍການຂອງນິສັຍ ແລະຄວາມປະພຶດທີ່ບໍ່ກົງກັນກັບຊີວິດໃໝ່ໃນພຣະຄຣິດທີ່ຄຣິສຕຽນຄວນປະຖິ້ມຈາກຊີວິດຂອງເຂົາ. ທ່ານຍັງໄດ້ອ້າງເຫດຜົນອັນດີສຳລັບການປະພຶດແບບໃໝ່ ຫລືສຳລັບຫລີກລ້ຽງຄວາມບາບທີ່ໄດ້ຂຽນໄວ້ນັ້ນ. ຄວາມບາບເຫຼົ່ານີ້ຈະເຮັດໃຫ້ພຣະເຈົ້າບໍ່ພໍພຣະທັຍ (ໃຈຮ້າຍ) ຊຶ່ງເປັນການກະທຳຂອງພຣະເຈົ້າຕໍ່ຄວາມບໍ່ເຊື່ອຟັງຂອງເຮົາ. ພຣະພິໂຣດຂອງພຣະເຈົ້າທີ່ມີຕໍ່ຊາຕານແລະຄວາມບາບຈະຖືກເປີດເຜີຍໃນອະນາຄົດ--ໃນວັນພິພາກສາ. ພຣະເຈົ້າເອົາຈິງເອົາຈັງຕໍ່ຄວາມບາບ ສະນັ້ນພວກເຮົາຄວນເອົາຈິງເອົາຈັງຕໍ່ຄວາມບາບເໝືອນກັນ.

ຄົນໃນສມັຍຂອງອາຈານໂປໂລກໍໃຊ້ຊີວິດຢູ່ຮ່ວມກັນກ່ອນແຕ່ງງານ ເໝືອນກັນກັບຄົນໃນສັງຄົມຂອງພວກເຮົາ. ພວກເຂົາເປັນທາດຂອງຕັນຫາ ແລະຖືກຊັກຈູງໃຫ້ເຮັດຄວາມຊົ່ວ; ຊີວິດໄດ້ຖືກຜູກດ້ວຍຄວາມໂລບ--ຄວາມຢາກແບບບໍ່ມີເມືອງພໍທີ່ດຶງເຂົ້າໄປຫາການຫຼົງນະບູຊາ. ອາຈານໂປໂລໄດ້ຊັກຊວນຊາວເມືອງໂກໂລຊາຍໃຫ້ຄິດແລະປະພຶດຕົນໃຫ້ແຕກຕ່າງກັບວັທນະທັມປະເພນີຂອງເຂົາ. ພວກເຮົາກໍເໝືອນກັນຄວນຕ້ອງຄິດແລະປະພຶດຕົນໃຫ້ແຕກຕ່າງ ແລະຖືວ່າພວກເຮົາໄດ້ຕາຍແລະບໍ່ມີຄວາມຮູ້ສຶກຕໍ່ຄວາມຍົວະເຍົ້າໃຫ້ເຮັດເໝືອນຄົນທີ່ຢູ່ໃນສັງຄົມຮອບຂ້າງເຮົາ. ຊີວິດຂອງເຮົາຄວນສະແດງໃຫ້ເຫັນຜົນວ່າພວກເຮົາມີຄວາມຄິດແບບໃໝ່ແລ້ວ.

ໃນຂໍ້ 5 ອາຈານໂປໂລໄດ້ບອກເຖິງເຫດຜົນທີ່ຕ້ອງຫຼີກຈາກການທຳລາຍຂອງຄວາມບາບ, ຄວາມບາບເຫຼົ່ານີ້ໄດ້ສະທ້ອນເຖິງການປະພຶດທີ່ຕິດແໜ້ນກັບຊີວິດການເປັນຢູ່ຂອງຜູ້ທີ່ຈຳຈອງຢູ່ກັບຄວາມມືດ. ຊາວໂກໂລຊາຍໄດ້ເຄີຍດຳເນີນຢູ່ກັບສິ່ງເຫຼົ່ານີ້ມາກ່ອນ--ມີຄວາມປະພຶດແບບນີ້ມາກ່ອນ. ຜູ້ທີ່ເປັນຄົນໃໝ່ແລະເປັນໄພ່ພົນຂອງຣາຊອາ

ຈັກຂອງພຣະເຈົ້າຕ້ອງໃຊ້ຊີວິດຕາມມາດຕະຖານທີ່ສູງກວ່າ. ໃນຖານະທີ່ພວກເຮົາເປັນຜູ້ທີ່ເຊື່ອ ພວກເຮົາຕ້ອງລະວັງຢ່າ ໃຫ້ການປະພຶດໃນຊີວິດຂອງເຮົາເຮັດໃຫ້ຄົນອື່ນສັບສົນແລະຊູນສະດຸດລົ້ມລົງ.

ໃຫ້ເໝືອນກັນກັບຊາວເມືອງໂກໂລຊາຍ, ພວກເຮົາຕ້ອງປະຖິ້ມຫຼືແກ້ເຄື່ອງນຸ່ງອັນເໝັນສາບທີ່ພວກເຮົານຸ່ງຕອນທີ່ພວກເຮົາຍັງບໍ່ໄດ້ຮັບພຣະເຈົ້ານັ້ນ ແລະຫົ່ມເຄື່ອງນຸ່ງໃໝ່ຂອງຊີວິດໃນພຣະເຢຊູຄຣິດ. ຄົນໃໝ່ຕ້ອງນຸ່ງເຄື່ອງໃໝ່; ພວກເຮົາຕ້ອງລອກແກ້ເອົາເຄື່ອງນຸ່ງທີ່ເຕັມໄປດ້ວຍຄວາມເວົ້າອັນຫຍາບຄາຍ ແຂງກະດ້າງດ້ວຍຄວາມໂມໂຫນັ້ນອອກ. ຄວາມຄິດທີ່ເຕັມໄປດ້ວຍເລ້ຫຼ່ຽມມານຍາທີ່ຢາກທຳລາຍຄົນອື່ນນັ້ນຕ້ອງບໍ່ໃຫ້ມີຢູ່ໃນຕູ້ເຄື່ອງຂອງເຮົາ. ພາສາທີ່ສຽດສີໂຫດຮ້າຍນັ້ນບໍ່ເໝາະສົມກັບຊີວິດຄຣິສຕຽນ. ຄວາມປະພຶດເຫຼົ່ານີ້ບໍ່ສະແດງຜົນດີຕໍ່ຄຸນຄ່າຂອງພຣະຄຣິດ.

ອາຈານໂປໂລໄດ້ສັ່ງຢ້ຳໃຫ້ຊາວໂກໂລຊາຍຢຸດຕົວະກັນ, ຜີມານຊາຕານຜູ້ຄອບຄອງພື້ນທີ່ແຫ່ງຄວາມມືດເປັນ “ພໍ່ຂອງຄວາມຕົວະ” (ຢຮ 8:44). ຄວາມຕົວະເປັນຄວາມຫຼອກລວງ, ພວກເຮົາສາມາດຫຼອກຄົນອື່ນໂດຍໃຊ້ເຄິ່ງນຶ່ງຂອງຄວາມຈິງ (ຕົວະ) ແລະເວົ້າເກີນຄວາມຈິງ(ຕົວະ).

ການຖືກສ້າງຂຶ້ນໃໝ່ດ້ວຍຄວາມຮູ້ກໍເປັນຜົນຈາກການຖືກສ້າງຂຶ້ນໃໝ່ຝ່າຍຈິດວິນຍານ--ແມ່ນການຕັ້ງໃຈຕໍ່ສິ່ງທີ່ຢູ່ເບື້ອງເທິງ (ກລຊ 3:2). ຜູ້ທີ່ວາງໃຈເຊື່ອໃນພຣະຄຣິດເພື່ອຮັບເອົາຄວາມພົ້ນໄດ້ສວມສະພາບເປັນຄົນໃໝ່ແລະຕ້ອງມີການປະພຶດແບບໃໝ່. ໃນຖານະຜູ້ເຊື່ອ, ພວກເຮົາໄດ້ຕາຍຕໍ່ຄວາມບາບໃນພຣະຄຣິດແລ້ວ (ກລຊ 3:3) ດັ່ງນັ້ນ ເຮົາຕ້ອງສັງຫານຄວາມບາບໃນຊີວິດຂອງເຮົາໃຫ້ຕາຍ.

ພຣະເຈົ້າໄດ້ຕັ້ງພຣະທັຍຈະປ່ຽນແປງຜູ້ເຊື່ອໃຫ້ເປັນເໝືອນພຣະບຸດຂອງພຣະອົງ, ຜູ້ທີ່ປ່ຽນຊີວິດເປັນເໝືອນພຣະເຢຊູກໍສະແດງການປະພຶດຕົນແບບໃໝ່. ການດຳເນີນຊີວິດໃໝ່ຂອງຜູ້ເຊື່ອນັ້ນໄດ້ປ່ຽນແປງຈາກຄວາມປະພຶດທີ່ເປັນອຸປສັກກີດຂວາງກັບຄວາມສຳພັນ ມາເປັນຄວາມປະພຶດແບບໃໝ່.

ຢູ່ໃນໂລກຂອງອາຈານໂປໂລ, ພວກຊາວກຣີກດູຖູກພວກປ່າເຖື່ອນ ຄືພວກທີ່ບໍ່ເວົ້າພາສາກຣີກ, ຄົນປ່າທີ່ເປັນຂ້ອຍຂ້າ ຖືວ່າມີຖານະຕ່ຳຕ້ອຍກວ່າພວກກຣີກ, ພວກຄົນຢິວກໍດູຖູກຄົນທີ່ບໍ່ເປັນຄົນຢິວ, ຄົນທີ່ມີອິສຣະພາບກໍດູຖູກພວກທີ່ເປັນຂ້ອຍຂ້າ ຜູ້ທີ່ບໍ່ມີສິດເສຣີພາບ. ການເປັນຄຣິສຕຽນທຳລາຍກຳແພງແຫ່ງຄວາມສຳພັນ ແລະນຳເອົາຄົນທີ່ແຕກຕ່າງເຂົ້າຫາກັນ. ມີແຕ່ໃນພຣະຄຣິດເທົ່ານັ້ນ ຄົນປ່າເຖື່ອນຈະສາມາດຖືກຮຽກເອີ້ນວ່າເປັນອ້າຍນ້ອງດຽວກັນ.

## 3. **<u>ສາຍສຳພັນແບບໃໝ່</u>**: ໂກໂລຊາຍ 3:12-14

ອາຈານໂປໂລ ໄດ້ອະທິບາຍວ່າຄົນໃໝ່ໃນພຣະຄຣິດນັ້ນເປັນໄພ່ພົນທີ່ພຣະເຈົ້າເລືອກໄວ້--ຜູ້ທີ່ບໍຣິສຸດທີ່ຖືກແຍກອອກແລະຮັກດ້ວຍພຣະອົງ. ຜູ້ທີ່ເປັນຂອງພຣະເຈົ້າແລະໃຊ້ຊີວິດຢູ່ໃຕ້ການປົກຄອງຂອງພຣະບຸດມີຄວາມສັມພັນແບບໃໝ່ຕໍ່ຄົນອື່ນ. ອາຈານໂປໂລໄດ້ສັ່ງໃຫ້ຊາວໂກໂລຊາຍຖອດເຄື່ອງນຸ່ງອັນເປື້ອນເປິທີ່ພວກເຂົາໄດ້ນຸ່ງກ່ອນຮັບຄວາມພົ້ນ. ຕອນນີ້ອາຈານໂປໂລໄດ້ສັ່ງໃຫ້ພວກເຂົານຸ່ງຫົ່ມເຄື່ອງນຸ່ງແຫ່ງຄວາມດີທີ່ຕັດຫຍິບດ້ວຍພຣະເຈົ້າເອງແລະທີ່ພຽບພ້ອມກັບຊີວິດໃໝ່ໃນພຣະຄຣິດ.

ຄວາມສຳພັນຂອງຄຣິສຕຽນຖືກປົກຄອງດ້ວຍຄຸນງາມຄວາມດີທີ່ພຣະຄຣິດສ້າງຂຶ້ນໃນຕົວເຮົາ, ພວກເຮົາຕ້ອງຫົ່ມຕົວເຮົາດ້ວຍໃຈເມດຕາ ທີ່ເປັນຫ່ວງເປັນໃຍຕໍ່ຄົນອື່ນ, ໃຈປານີທີ່ຊ່ວຍຄົນອື່ນທີ່ຄິດທຳລາຍເຮົາ, ໃຈຖ່ອມລົງທີ່ຖືວ່າຄົນອື່ນສຳຄັນກວ່າຕົນເອງ, ໃຈອ່ອນສຸພາບທີ່ມີຄວາມເຂັ້ມແຂງສາມາດບັງຄັບຕົນ, ໃຈອົດທົນດົນນານທີ່ຊ່ວຍໃຫ້ເຮົາສາມາດຄົບກັບຄົນທີ່ເວົ້າຍາກແລະສະພາບການທີ່ລຳບາກ. ພວກເຮົາຕ້ອງອົດທົນຕໍ່ກັນແລະກັນ ເຖິງແມ່ນວ່າເຮົາບໍ່ມັກບາງສິ່ງບາງຢ່າງຂອງກັນແລະກັນ. ມ້ອນທ້າຍ ແມ່ນພວກເຮົາຕ້ອງອະພັຍໃຫ້ກັນແລະກັນ, ການທີ່ບໍ່ຍອມຍົກໂທດໃຫ້ກັນຫຼືຮັບຄວາມຂໍອະພັຍ ເປັນຕົ້ນເຫດແຫ່ງການທຳລາຍຄວາມສຳພັນ. ເພາະວ່າຂ້າພະເຈົ້າເປັນຜູ້ທີ່ໄດ້

ຮັບການອະພັຍໂທດຈາກພຣະເຈົ້າ, ຂ້າພະເຈົ້າບໍ່ມີສິດທີ່ຈະທວງແທນການໃຫ້ອະພັຍຕໍ່ຄົນອື່ນໄວ້. ພວກເຮົາຕ້ອງໃຫ້ອະພັຍແກ່ຄົນອື່ນເໝືອນກັນກັບພຣະເຈົ້າໄດ້ອະພັຍໃຫ້ແກ່ພວກເຮົາ. ກ່ອນອື່ນໝົດ ພວກເຮົາຕ້ອງນຸ່ງຫົ່ມເອົາຄວາມຮັກທີ່ເປັນສັນຍາລັກຂອງຄຣິສຕຽນ. ຄວາມຮັກດຶງເອົາທຸກສິ່ງໃຫ້ເຂົ້າກັນ--ເປັນເຊືອກມັດການເປັນອັນນຶ່ງອັນດຽວທີ່ສົມບູນ.

## ບົດຮຽນຊີວິດ:

ໃນເວລາທີ່ພວກເຮົາກາຍເປັນຄຣິສຕຽນ, ການປ່ຽນແປງທີ່ໜ້າເຫຼືອເຊື່ອໄດ້ເກີດຂຶ້ນ. ທຳອິດ, ໂດຍຜ່ານການຮໍ່າຮຽນພຣະຄັມພີ ແລະການອະທິຖານ ພວກເຮົາໄດ້ຕັ້ງຈິດໃຈຈົດຈໍ່ໃສ່ພຣະຄຣິດ. ຜົນທີ່ໄດ້ຮັບຄື ພວກເຮົາໄດ້ປະຖິ້ມນິສັຍທີ່ບໍ່ດີ ແລະສວມເອົາລັກສະນະທີ່ເໝືອນກັບພຣະຄຣິດ, ເມື່ອເຮົາຮັກສິ່ງນີ້ ຄວາມສຳພັນຂອງເຮົາກໍຖືກປ່ຽນແປງ.

ນີ້ແມ່ນຂໍ້ສເນີບາງຢ່າງທີ່ຈະຊ່ວຍໃຫ້ເຮົາມີຈິດໃຈຈົດຈໍ່ໃສ່ພຣະຄຣິດໃນໂລກທີ່ເຕັມໄປດ້ວຍສິ່ງກີດຂວາງ:

1. ເອົາແບບຢ່າງຈາກພຣະເຢຊູ ໃນທຸກສິ່ງທີ່ທ່ານທຳ. ໃຫ້ຈຳໄວ້ວ່າໂລກກຳລັງເບິ່ງເຮົາຢູ່.
2. ໃຫ້ລຽງລຳດັບຄວາມຄິດໃໝ່ ສິ່ງໃດທີ່ພໍພຣະທັຍພຣະເຈົ້າ ຈິ່ງທຳ. ໃຫ້ຈຳໄວ້ວ່າຄວາມຄິດຈູງການປະພຶດ.
3. ໃຫ້ໂຍນຖິ້ມສິ່ງທີ່ນຳພາຄວາມຄິດແບບໂລກ. ໃຫ້ຈຳໄວ້ວ່າການເລືອກຜິດຈະທຳລາຍການເປັນພະຍານ.
4. ໃຫ້ໃຊ້ການອະທິຖານແລະພາວະນາຂໍ້ພຣະຄັມພີເພື່ອຮັກສາຊີວິດໃຫ້ຖືກທາງ. ໃຫ້ຈຳໄວ້ວ່າຄວາມເວົ້າຕົວະຢູ່ໃນນໍ້າສ້າງຂອງຫົວໃຈ ຈະຖືກຕັກຂຶ້ນມາໃສ່ຄຸຂອງຄວາມເວົ້າແລະການປະພຶດ.
5. ການແຍກພາກສ່ວນທີ່ເປັນທາງສາສນາແລະໂລກທັມມະດານັ້ນເປັນການເລົ່າລືທີ່ອັນຕລາຍ. ໃຫ້ຈຳໄວ້ວ່າທຸກໆສິ່ງທີ່ເຮົາກະທຳເປັນຂອງພຣະເຈົ້າທັງນັ້ນ.

ວັສດຸສິ່ງຂອງທາງໄປສະນີທີ່ບໍ່ມີປໂຍດເປັນພາກສ່ວນຂອງຊີວິດ, ມັນຫລັ່ງໄຫຼເຂົ້າມາໃນຫ້ອງການແລະໂຕະທຳງານຂອງຂ້າພະເຈົ້າຕລອດ. ໃນເມື່ອຂ້າພະເຈົ້າບໍ່ມີຄວາມສາມາດທີ່ຈະຢັບຢັ້ງພວກໄປສະນີ ແຕ່ຂ້າພະເຈົ້າສາມາດໃຫ້ປ່ອຍໃຫ້ໂຕະຂອງຂ້າພະເຈົ້າມີແຕ່ສິ່ງທີ່ຂ້າພະເຈົ້າຕ້ອງການໄດ້. ວິທີດຽວກັນ, ແຕ່ລະວັນ ພວກເຮົາຖືກໂຈມຕີດ້ວຍຮ້ອຍສິ່ງພັນແບວ ທີ່ຜ່ານເຂົ້າໃນຊີວິດໃຫ້ເຮົາເຮັດພ້ອມທີ່ຈະນຳຈິດໃຈຂອງເຮົາເພີນໄປໄກຈາກພຣະຄຣິດ. ໃນຖານະທີ່ເປັນຜູ້ເຊື່ອ ພວກເຮົາຕ້ອງຝຶກແອບແລະຕຶກຕອງໃຫ້ດີໃນການຮັກສາຄວາມຄິດຈິດໃຈຂອງເຮົາ. ຖ້າເຮົາຫຼົ້ມເຫຼວໃນການກະທຳນີ້ ພວກເຮົາກໍຈະຖືກນຳພາໄປເຊື່ອແລະປະພຶດຕາມສິ່ງທີ່ບໍ່ຄູ່ຄຽງກັບພຣະຄຳຂອງພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BS